International Labour Organization | ILO/Korea Partnership Programme

ILO brief

# ບົດສະຫຼຸບ ແລະ ຂໍ້ແນະນຳທາງດ້ານນະໂຍບາຍໃນການຜັນຂະຫຍາຍວຽກງານປົກປ້ອງສັງຄົມໃນ ສປປ ລາວ

ມັງກອນ 2023

## ບົດສະຫຼຸບ

ການຈ້າງງານນອກລະບົບເປັນເງື່ອນໄຂທີ່ສຳຄັນຂອງຕະຫຼາດແຮງງານ ແລະ ໂຄງສ້າງດ້ານວິສາຫະກິດຂອງ ສປປ ລາວ, ມີ 92% ຂອງແຮງງານທີ່ບໍ່ແມ່ນລັດຖະກອນທີ່ເຮັດວຽກຢູ່ໃນວິສາຫະກິດນອກລະບົບ ຫຼື ໃນຄົວເຮືອນ, ແລະ 81% ຂອງແຮງງານທີ່ບໍ່ແມ່ນລັດຖະກອນມີການຈ້າງງານຕາມເງື່ອນໄຂນອກລະບົບ.

ມີປະມານ 9 ໃນ 10 ຄົນທີ່ບໍ່ແມ່ນລັດຖະກອນບໍ່ໄດ້ຮັບການຄຸ້ມຄອງຈາກປະກັນສັງຄົມ. ເຖິງແມ່ນວ່າຈະຢູ່ໃນລະບົບກໍ່ຕາມ, ຫຼາຍກວ່າເຄິ່ງ (57%) ຂອງກຳລັງແຮງງານບໍ່ມີປະກັນ.

ຄາດຄະເນວ່າບໍ່ຮອດ 1/3 (30%) ຂອງວິສາຫະກິດທັງໝົດໄດ້ລົງທະບຽນຢ່າງເປັນທາງການ.

ລະດັບການຈ້າງງານນອກລະບົບ ແລະ ຄວາມສ່ຽງສູງນີ້ໝາຍຄວາມວ່າແຮງງານສ່ວນໃຫຍ່ບໍ່ຖືກປົກຄຸມດ້ວຍສິດທິດ້ານແຮງງານ ຫຼື ການປົກປ້ອງທາງສັງຄົມ, ເຊິ່ງເຮັດໃຫ້ພວກເຂົາມີຄວາມສ່ຽງຫຼາຍດ້ານທາງດ້ານເສດຖະກິດ ແລະ ວົງຈອນຊີວິດ. ລະດັບການຈ້າງງານຂອງຜູ້ອອກແຮງງານ ແລະ ພາກວິສາຫະກິດຕໍ່າຍັງສົ່ງຜົນກະທົບທາງລົບຕໍ່ລາຍຮັບຂອງລັດຖະບານເຊິ່ງເຮັດໃຫ້ມີເງິນສົມທົບປະກັນສັງຄົມ ແລະ ພາສີອາກອນຫລຸດລົງ.

ສິ່ງກີດຂວາງໃນການໄດ້ຮັບການຄຸ້ມຄອງປະກັນສັງຄົມມີທັງດ້ານການເງິນ ແລະ ດ້ານອື່ນໆອີກ. ໃນຂະນະທີ່ຄວາມສາມາດໃນການຈ່າຍສົມທົບເປັນສິ່ງກີດຂວາງທີ່ສຳຄັນສຳຫຼັບຫຼາຍໆຄົນ, ຫຼື ຖືໄດ້ວ່າມັນເປັນອຸປະສັກຕົ້ນຕໍໃນການເຂົ້າເຖິງປະກັນສັງຄົມ. ຂໍ້ມູນການສຳຫຼວດແຫ່ງຊາດຊີ້ໃຫ້ເຫັນວ່າ 52% ຂອງຜູ້ອອກແຮງງານທັງຫມົດມີທ່າແຮງທີ່ຈະຈ່າຍສົມທົບເຂົ້າໃນການປະກັນສັງຄົມ, ເຖິງແມ່ນວ່າມັນຈະແຕກຕ່າງກັນໃນແຕ່ລະຂະແຫນງເສດຖະກິດ - ເຊັ່ນ ການຄ້າຂາຍຍົກ ແລະ ຂາຍຍ່ອຍ, ກະສິກຳ, ແລະ ຜູ້ອອກແຮງງານໃນຄົວເຮືອນທີ່ມີຄວາມສາມາດຈ່າຍສົມທົບຂ້ອນຂ້າງຕໍ່າ. 13% ຂອງຄົວເຮືອນທີ່ຍັງມີໜີ້ສິນ, ແລະ ເປັນຄົວເຮືອນທີ່ມີທ່າອ່ຽງຈະທຸກຍາກກວ່າເມື່ອທຽບກັບຄອບຄົວທີ່ບໍ່ມີໜີ້. ຂໍ້ມູນຍັງສະແດງໃຫ້ເຫັນອີກວ່າຜູ້ຊາຍ ແລະ ແມ່ຍິງມີລາຍຮັບທີ່ແຕກໂຕນກັນຫຼາຍ, ເຊິ່ງແມ່ຍິງມີລາຍໄດ້ໜ້ອຍກວ່າຜູ້ຊາຍທັງຂະແໜງການໃນ ແລະ ນອກລະບົບ, ແລະ ເກີນມາດຕະຖານ, ເຊິ່ງມີລາຍຮັບສະເລ່ຍຕໍ່ເດືອນເກືອບ 20 ເທົ່າທຽບກັບກຸ່ມທຸກຍາກສຸດນອກເຫນືອຈາກອຸປະສັກທາງດ້ານການເງິນ,ສິ່ງກີດຂວາງທີ່ສຳຄັນອີກອັນຫນຶ່ງຂອງການເຂົ້າເຖິງປະກັນສັງຄົມແມ່ນຄວາມສັບຊ້ອນທາງດ້ານການບໍລິຫານຂອງຂັ້ນຕອນການລົງທະບຽນ.

ແຮງງານນອກລະບົບຊີ້ໃຫ້ເຫັນວ່າເຂົາເຈົ້າມີຄວາມກັງວົນກັບ 2 ບັນຫາໃຫ່ຍ ເຊັ່ນ ຄວາມສາມາດໃນການຕື່ມແບບຟອມ ແລະ ບໍ່ມີບັດປະຈຳໂຕ ແລະ ເອກະສານອື່ນໆທີ່ຈຳເປັນເພື່ອລົງທະບຽນ.

ຕໍ່ກັບເງື່ອນໄຂເຫຼົ່ານີ້ໝາຍຄວາມວ່າຜູ້ອອກແຮງງານໃນລະບົບ ແລະ ວິສາຫະກິດຂະໜາດກາງ ແລະ ຂະໜາດໃຫຍ່ມີທ່າອ່ຽງທີ່ຈະໄດ້ຮັບການປະກັນຫຼາຍກວ່າແຮງງານນອກລະບົບ ແລະ ວິສາຫະກິດຂະໜາດນ້ອຍ. ສິ່ງດັ່ງກ່າວນີ້, ຖ້າເບິ່ງໃນທາງກັບກັນໝາຍຄວາມວ່າການຂຶ້ນທະບຽນວິສາຫະກິດໃນລະບົບແມ່ນກຸນແຈສຳຄັນໃນການເພີ່ມອັດຕາການປົກຄຸມປະກັນສັງຄົມ. ເນື່ອງຈາກວ່າຈຸນລະວິສາຫະກິດ ແລະ ວິສາຫະກິດຂະຫນາດນ້ອຍກວມເອົາເຖິງ 99% ຂອງວິສາຫະກິດທັງໝົດໃນທົ່ວປະເທດ, ສະນັ້ນ ຈຳເປັນຕ້ອງມີການສ້າງຍຸດທະສາດຮ່ວມກັນລະຫວ່າງບັນດາກະຊວງທີ່ກ່ຽວຂ້ອງຕ່າງໆ.

ສະຫຼຸບ, ເຫັນວ່າຂໍ້ມູນຈາກການສຳຫຼວດກຳລັງແຮງງານຂອງລາວ ແລະ ຂໍ້ມູນຈາກອົງການປະກັນສັງຄົມໄດ້ແນະນຳວ່າບໍ່ແມ່ນພະນັກງານລັດຖະກອນ ແລະ ພະນັກງານວິສາຫະກິດທັງໝົດໄດ້ຮັບການປະກັນ ຫຼື ເຮັດວຽກພາຍໃຕ້ເງື່ອນໄຂໃນລະບົບ.



## ຄວາມໝາຍທາງດ້ານນະໂຍບາຍ

ແຮງງານໃນຂະແໜງກະສິກຳເປັນກຸ່ມໃຫຍ່ທີ່ສຸດໃນບັນດາຂະແຫນງເສດຖະກິດທັງຫມົດ, ປະຈຸບັນມີປະມານ 95% ບໍ່ມີປະກັນ. ການເພີ່ມອັດຕາການປົກຄຸມກຸ່ມນີ້ສາມາດສົ່ງຜົນກະທົບອັນສຳຄັນຕໍ່ອັດຕາການປົກຄຸມໂດຍລວມ. ຢ່າງໃດກໍຕາມ, ເງື່ອນໄຂສຳລັບການຈັດຕັ້ງປະຕິບັດສິ່ງນີ້ແມ່ນບໍ່ງ່າຍເລີຍ. ແຮງງານໃນຂະແໜງກະສິກຳສ່ວນໃຫຍ່ເຮັດວຽກໃນຄົວເຮືອນ ຫຼື ມີກິດຈະການຂອງຕົນເອງ (94% ), ແລະ ມີພຽງແຕ່ 2% ມີການຈ້າງງານໃນລະບົບ.

ແຮງງານຂະແໜງກະສິກຳນີ້ຍັງມີທ່າອ່ຽງຢູ່ໃນກຸ່ມກຳລັງແຮງງານທີ່ທຸກຍາກທີ່ສຸດມີຄວາມສາມາດໃນການຈ່າຍເງິນສົມທົບປະກັນສັງຄົມຕ່ຳທຽບກັບແຮງງານໃນຂະແຫນງການອື່ນໆ, ສະແດງໃຫ້ເຫັນວ່າການອຸດຫນູນຂອງລັດຖະບານສຳລັບການຈ່າຍເງິນສົມທົບປະກັນສັງຄົມແລະ/ຫຼືການຊ່ວຍເຫຼືອສັງຄົມມີແນວໂນ້ມທີ່ຈຳເປັນຫຼາຍສຳລັບກຸ່ມນີ້.

ສາມາດເວົ້າໄດ້ວ່າ, ແຮງງານພາກກະສິກຳປະມານ 3,500 ຄົນໄດ້ຮັບການຈ້າງງານຢູ່ໃນວິສາຫະກິດຂະໜາດກາງ ຫຼື ໃຫຍ່ (ມີພະນັກງານຫຼາຍກວ່າ 50 ຄົນ), ໃນນັ້ນ 12,500 ຄົນຈ້າງງານຢູ່ໃນວິສາຫະກິດຂະຫນາດນ້ອຍ (ມີພະນັກງານ 5-49 ຄົນ). ມີທ່າແຮງທີ່ຈະເພີ່ມມາດຕະການປະຕິບັດກົດຫມາຍປະກັນສັງຄົມກັບບັນດາກຸ່ມຍ່ອຍເຫຼົ່ານີ້.

ການວິໄຈໃນຕໍ່ໜ້າຍັງສາມາດສຶກສາຂະແຫນງຍ່ອຍທີ່ມີທ່າແຮງສູງກວ່າຕື່ມອີກ, ຕົວຢ່າງ ຜູ້ຜະລິດເພື່ອສົ່ງອອກ, ຜູ້ທີ່ອາດຈະມີເສດຖະກິດ ແລະ ມີຄວາມສາມາດໃນການຈ່າຍເງິນສົມທົບໄດ້ຫຼາຍກວ່າ.



ຂະແໜງການຜະລິດມີອັດຕາສ່ວນແຮງງານທີ່ສູງສຸດ (34%) ໃນບັນດາຂະແໜງເສດຖະກິດທັງໝົດ (ພ້ອມກັບຂະແໜງທີ່ພັກ ແລະ ຮ້ານອາຫານ). ນອກຈາກນີ້ຍັງມີຈຳນວນແຮງງານ (ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ)ຈຳນວນຫຼາຍທີ່ສຸດໃນວິສາຫະກິດຂະຫນາດກາງ ຫຼື ຂະຫນາດໃຫຍ່ (c.14,000). ນອກຈາກນັ້ນ, ຍັງມີອັດຕາສ່ວນແຮງງານທີ່ເຮັດວຽກຢູ່ໃນລະບົບຫຼາຍສຸດ, ແລະ ຄວາມສາມາດຈ່າຍເງິນສົມທົບປະກັນສັງຄົມກໍ່ຍັງສູງທຽບກັບແຮງງານໃນຂະແໜງການອື່ນ. ເນື່ອງຈາກວ່າມີຄວາມຈຳເປັນທີ່ຈະຕ້ອງມີໃບອະນຸຍາດດຳເນີນກິດຈະການໃນຫຼາຍພາກສ່ວນຂອງຂະແຫນງການນີ້, ດັ່ງນັ້ນ ຈຶ່ງມີທ່າແຮງຂ້ອນຂ້າງສູງທີ່ຈະເພີ່ມມາດຕະການປະຕິບັດ ແລະ ຂະຫຍາຍການປົກຄຸມໃຫ້ແກ່ແຮງງານເຫຼົ່ານີ້.

ຂະແໜງຂົນສົ່ງມີອັດຕາສ່ວນແຮງງານສູງ (27%). ແຮງງານຂະແໜງນີ້ສ່ວນຫຼາຍມີກິດຈະການເປັນຂອງຕົນເອງ, ມີພຽງແຕ່ປະມານ 4,700 ຄົນເຮັດວຽກຢູ່ໃນຈລະວິສາຫະກິດ ຫຼື ຂະໜາດນ້ອຍ (ແລະ ໜ້ອຍກວ່າ 1,000 ຄົນທີ່ເຮັດວຽກໃນວິສາຫະກິດຂະໜາດກາງ ແລະ ຂະໜາດໃຫຍ່), ຍ້ອນຄວາມສາມາດໃນການຈ່າຍເງິນສົມທົບທີ່ຂ້ອນຂ້າງສູງ, ເຂົາເຈົ້າມີທ່າແຮງທີ່ຈະຊອກຫາຄວາມຕ້ອງການໃນການຂໍໃບອະນຸຍາດດຳເນີນການເພື່ອເຂົ້າໃນລະບົບ, ປັບປຸງມາດຕະການ, ແລະ/ຫຼື ທົດລອງເຂົ້າຮ່ວມການປະກັນສັງຄົມພາກບັງຄັບ. ການວິໄຈໃນຕໍ່ໜ້າອາດຈະລົງເລິກສະເພາະແຮງງານຂະແຫນງຂົນສົ່ງ, ຕົວຢ່າງໃນບັນດາວິສາຫະກິດສາງເກັບເຄື່ອງທີ່ມີສັບຊິນຄົງທີ່ ຫຼື ຜູ້ປະກອບການຂົນສົ່ງສະເພາະ, ເພື່ອແນະນຳວິທີການທົດລອງໃນການຫັນເຂົ້າສູ່ລະບົບ.



ຂະແໜງທີ່ພັກ ແລະ ຮ້ານອາຫານມີອັດຕາສ່ວນແຮງງານສູງສຸດ (39%) ໃນບັນດາຂະແໜງເສດຖະກິດທັງໝົດ, ທັງເປັນໜຶ່ງໃນອັດຕາສ່ວນແຮງງານໃນລະບົບຫຼາຍກວ່າໝູ່ (20%). ຄວາມສາມາດໃນການຈ່າຍເງິນສົມທົບປະກັນສັງຄົມກໍ່ຂ້ອນຂ້າງສູງໃນບັນດາກຸ່ມນີ້. ຍ້ອນວ່າບັນດາວິສາຫະກິດໃນຂະແໜງທີ່ພັກ ແລະ ຮ້ານອາຫານມີສັບສິນຄົງທີ່ ແລະ ຈຳເປັນຕ້ອງມີໃບອະນຸຍາດດຳເນີນທຸລະກິດ, ຈຶ່ງເປັນອີກທ່າແຮງໜຶ່ງທີ່ຈະໝູນໃຊ້ບັນດາປັດໄຈເຫຼົ່ານີ້ເພື່ອແນໃສ່ເພີ່ມການຈ້າງງານໃນລະບົບ ແລະ ປັບປຸງການປົກຄຸມປະກັນສັງຄົມ. ການຄົ້ນຄວ້າໃນຕໍ່ໜ້າຄວນພິຈາລະນາໂຮງແຮມ ແລະ ທີ່ພັກແຍກອອກຈາກບາ ແລະ ຮ້ານອາຫານ, ເພື່ອສາມາດກຳນົດໃນການເພີ່ມມາດຕະການປະຕິບັດຕໍ່ກັບວິສາຫະກິດຈຸລະພາກ ແລະ ຂະໜາດນ້ອຍ.

ຍັງມີສອງຂະແໜງການທີ່ຕ້ອງໄດ້ເຮັດຄົ້ນຄ້ວາຢ່າງລະອຽດເປັນຕົ້ນແມ່ນການຄ້າຂາຍຍົກ ແລະ ຂາຍຍ່ອຍ ແລະ ການບໍລິການອື່ນໆ. ແຕ່ລະຂະແໜງມີແຮງງານເກືອບ 5,000 ຄົນທີ່ເຮັດວຽກຢູ່ໃນວິສາຫະກິດຂະໜາດກາງ ຫຼື ໃຫຍ່. ໃນບັນດາແຮງງານບໍລິການອື່ນໆ, 34% ແມ່ນຈ້າງງານໃນລະບົບ ແລະ ຄວາມສາມາດໃນການຈ່າຍເງິນສົມທົບປະກັນສັງຄົມສູງເພມື່ອທຽບກັບຂະແໜງການອື່ນໆ. ກົງກັນຂ້າມແຮງງານຂາຍສົ່ງ ແລະ ຂາຍຍ່ອຍ, ເຊິ່ງມີພຽງແຕ່ 8% ທີ່ຖືກຈ້າງງານໃນລະບົບ ແລະ ຄວາມສາມາດໃນການຈ່າຍສົມທົບຕໍ່າ (ຮອງລົງມາແມ່ນແຮງງານພາກກະສິກຳ).

ການວິໄຈໃນຕໍ່ໜ້າຄວນຄວນເບິ່ງລາຍລະອຽດໃນຂະແໜງການເຫຼົ່ານີ້ຕື່ມເພື່ອກຳນົດຂະແໜງການຍ່ອຍ ແລະ ກຸ່ມຍ່ອຍຂອງແຮງງານ (ຕົວຢ່າງ: ຄົນຂາຍເຄື່ອງແຄມທາງທຽບກັບເຈົ້າຂອງຮ້ານຜ້ທີ່ມີສັບສິນຄົງທີ່, ຫຼື ຮ້ານຂາຍສິ່ງປະເພດຕ່າງໆ) ເຊິ່ງມີເງື່ອນໄຂດີທີ່ສຸດໃນການປັບປຸງເຂົ້າສູ່ລະບົບ ແລະ ການປະຕິບັດມາດຕະການຕາມກົດໝາຍປະກັນສັງຄົມ.



ບົດສະຫຼຸບຫຍໍ້ຂອງອົງການແຮງງານສາກົນແມ່ນສ່ວນໜຶ່ງຂອງຜົນການສຶກສາດ້ານປະລິມານຂອງກຳລັງແຮງງານ ແລະ ໂຄງສ້າງດ້ານວິສາຫະກິດໃນ ສປປ ລາວ ເພື່ອເຂົ້າໃຈເລິກເຊິ່ງກ່ຽວກັບພາບລວມຂອງແຮງງານນອກລະບົບເພື່ອນຳມາສູ່ການອອກແບບນະໂຍບາຍປະກັນສັງຄົມ. ການສຶກສາຄັ້ງນີ້ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການຮ່ວມມືຂອງອົງການແຮງງານສາກົນ ແລະ ສ. ເກົາຫຼີ ແລະ ດຳເນີນການສຶກສາໂດຍສະຖາບັນຄົ້ນຄ້ວາດ້ານການຄຸ້ມຄອງນະໂຍບາຍອອດສຟອດ.

ໂດຍການຮ່ວມມືກັບ

ລາຍລະອຽດການຕິດຕໍ່

**ສຳນັກງານອົງການແຮງງານສາກົນສຳລັບພາກພື້ນອາຊີ ແລະ ປາຊີຟິກ**

ຕຶກສະຫະປະຊາຊາດ, ຖະໜົນລາດສະດຳເນີນນອກ, ບາງກອກ 10200, ຣາຊາອານາຈັກໄທ

ນາງ ເລີບລີນ ເດ — ຜູ້ຈັດການໂຄງການ
ທ. ທອງເຫຼັກ ຊົງ — ຜູ້ປະສານງານໂຄງການ
ນ. ນຸດທອງ ອາລຸນທອງ — ຜູ້ປະສານງານໂຄງການ

ໂທລະສັບ: +66 2288 1234
ແຟັກ: +66 2280 1735
ອີເມວ: BANGKOK@ilo.org

ອີເມວ: del@ilo.org
ອີເມວ: thongleck@ilo.org
ອີເມວ: alounthong@ilo.org

© ອົງການແຮງງານສາກົນ 2023